ສຳນັກງານ ຄຄຊ
ຂາເຂົ້າ ເລກທີ 1301
ວັນທີ 13.DEC.2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1728 /ອຄ.ກຄພນ.

ນະຄອນຫລວງວຽງຈັນ, ວັນທີ 07 ທັນວາ 2018.

ທະນາຄານແຫ່ງ ສປປ ລາວ
ຂາເຂົ້າ ເລກທີ 3204
ວັນທີ 11/12/2018
ໂທລະສັບ:

# ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ.

ເລື່ອງ: ແຈ້ງປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ເລກທີ 70/ສພຊ, ລົງວັນທີ 15/12/2015.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1645/ຫສນຍ.ກລຂ, ລົງວັນທີ 02 ຕຸລາ 2018.

ເພັດສະຖາພອນ ແກ້ວວົງວິຈິດ

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟເຂດເທດສະບານແຂວງ, ນະຄອນຫລວງ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫລວງວຽງຈັນ | 10,370 | 9,170 | 8,420 |
| 2 | ແຂວງຜົ້ງສາລີ | - | 9,930 | 9,180 |
| 3 | ແຂວງຫລວງນ້ຳທາ | - | 9,530 | 8,780 |
| 4 | ແຂວງອຸດົມໄຊ | 10,860 | 9,650 | 8,900 |
| 5 | ແຂວງບໍ່ແກ້ວ | 10,480 | 9,270 | 8,520 |
| 6 | ແຂວງຫລວງພະບາງ | 10,830 | 9,630 | 8,880 |
| 7 | ແຂວງໄຊຍະບູລີ | - | 9,570 | 8,820 |
| 8 | ແຂວງຫົວພັນ | - | 9,570 | 8,820 |
| 9 | ແຂວງຊຽງຂວາງ | - | 9,360 | 8,610 |
| 10 | ແຂວງວຽງຈັນ | 10,370 | 9,170 | 8,420 |
| 11 | ແຂວງບໍລິຄຳໄຊ | 10,450 | 9,250 | 8,500 |
| 12 | ແຂວງຄຳມ່ວນ | 10,400 | 9,200 | 8,450 |
| 13 | ແຂວງສະຫວັນນະເຂດ | 10,400 | 9,200 | 8,450 |
| 14 | ແຂວງສາລະວັນ | - | 9,380 | 8,630 |
| 15 | ແຂວງຈຳປາສັກ | 10,430 | 9,230 | 8,480 |
| 16 | ແຂວງເຊກອງ | - | 9,410 | 8,660 |
| 17 | ແຂວງອັດຕະປື | 10,610 | 9,410 | 8,660 |
| 18 | ແຂວງໄຊສົມບູນ | - | 9,410 | 8,660 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 10 ທັນວາ 2018 ເວລາ 6:00 ໂມງ ໃນຂອບເຂດທົ່ວປະເທດ.

- ການປັບລາຄາຄັ້ງນີ້ ໄດ້ປັບລາຄານ້ຳມັນເຊື້ອໄຟ ທຸກຊະນິດລົງ ຄື: ນ້ຳມັນແອັດຊັງພິເສດ 270 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ 240 ກີບ/ລິດ, ນ້ຳມັນກາຊວນ 190 ກີບ/ລິດ; ເພີ່ມກຳໄລຂາຍຍົກ ນ້ຳມັນເຊື້ອໄຟ ທຸກຊະນິດ 20 ກີບ/ລິດ ແລະ ເພີ່ມການເກັບເງິນຄັງແຮນ້ຳມັນແອັດຊັງທຳມະດາ 40 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ 90 ກີບ/ລິດ ແລະ ນ້ຳມັນກາຊວນ 90 ກີບ/ລິດ.

- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນ ຂ້າງເທິງນີ້ ຢ່າງເຂັ້ມງວດ ແລະ ຄຸ້ມຄອງປໍ້າຂາຍຍ່ອຍຂອງຕົນໃຫ້ບໍລິການຢ່າງເປັນປົກກະຕິ.

- ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 1566 /ກຄພນ.ຄສລ, ລົງວັນທີ 07 ທັນວາ 2018 ຈົນກວ່າຈະມີການປ່ຽນແປງ.

- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1540/ອຄ.ກຄພນ, ລົງວັນທີ 08 ພະຈິກ 2018.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ

<u>ບ່ອນສົ່ງ</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ).